# ຄຳທຳນາຍກາຍເປັນຈິງ




## ຄວາມຝັນຂອງກະສັດ

**ກະສັດເນບູກາດເນສຊາ(ກະສັດກຸງບາບິໂລນ)ໄດ້ຮ້ອງພວກໝໍດູໝໍມົນມາເຂົ້າເຝົ້າແລະພະອົງໄດ້ກ່າວຫຍັງຕໍ່ພວກເຂົາ?**

“ພຣະອົງຊົງກ່າວຕໍ່ພວກເຂົາວ່າ, ເຮົາໄດ້ຝັນບໍ່ດີເປັນທຸກໃຈຫລາຍ ເຮົາຢາກຮູ້ວ່າຄວາມຝັນນັ້ນເປັນຢ່າງໃດ” (ດານີເອນ 2:3)

**ຫລັງຈາກທີ່ກະສັດໄດ້ຂູ່ພວກໝໍມົນໝໍດູວ່າ ພວກເຂົາຈະຕ້ອງຖືກປະຫານຊີວິດຖ້າພວກເຂົາບໍ່ສາມາດບອກຄວາມຝັນແລະຄຳແກ້ຄວາມຝັນຂອງພະອົງ ແລະພວກເຂົາໄດ້ຕອບກະສັດວ່າແນວໃດ?**

“ພວກຫມໍວິຊາອາຄົມໄດ້ທູນພຣະຣາຊາວ່າ, “ບໍ່ມີຄົນໃດດອກໃນພື້ນພິພົບນີ້ທີ່ສາມາດບອກສິ່ງທີ່ພຣະອົງຢາກຮູ້ໄດ້ ບໍ່ມີພຣະຣາຊາອົງຍິ່ງໃຫຍ່ແລະຊົງຣິດອົງໃດໄຕ່ຖາມເຊັ່ນນີ້ກັບພວກຫມໍດູ ຫມໍມົນແລະຫມໍວິຊາອາຄົມ ສິ່ງທີ່ພຣະຣາຊາຖາມມານັ້ນຍາກຫລາຍ ບໍ່ມີໃຜຈະຖວາຍຄຳຕອບແກ່ພຣະອົງໄດ້ ນອກຈາກພວກພຣະຊຶ່ງບໍ່ໄດ້ເປັນມະນຸດ” (ດານີເອນ 2:10-11)

**ຫລັງຈາກພວກໝໍດູໝໍມົນສາລະພາບວ່າພວກເຂົາບໍ່ສາມາດບອກແລະແກ້ຄວາມຝັນຂອງກະສັດໄດ້ ແມ່ນໃຜທີ່ສະໝັກແປຄາມຝັນໃຫ້ກະສັດ?**

“ດານີເອນໄດ້ເຂົ້າເຝົ້າພຣະຣາຊາໃນທັນທີ ແລະທູນຂໍໃຫ້ພຣະອົງເລື່ອນກຳນົດເວລາປະຫານ ເພື່ອວ່າທ່ານຈະໄດ້ຖວາຍຄຳແກ້ຄວາມຝັນແດ່ພຣະອົງ” (ດານີເອນ 2:16)

**ຫລັງຈາກດານີເອນແລະໝູ່ຂອງລາວໄດ້ອ້ອນວອນຕໍ່ພຣະເຈົ້າ ຄວາມຝັນແລະຄຳແກ້ຝັນໄດ້ຖືກເປີດເຜີຍໃຫ້ດານີເອນຮູ້ໂດຍຜ່ານທາງໃດ?**

“ແລ້ວໃນຄືນນັ້ນ ພຣະເຈົ້າໄດ້ຊົງເຜີຍເຣື່ອງເລິກລັບນີ້ໃຫ້ດານີເອນຮູ້ທາງນິມິດ ດັ່ງນັ້ນ ດານີເອນຈຶ່ງສັຣເສີນພຣະເຈົ້າເທິງຟ້າສວັນ” (ດານີເອນ 2:19)

### ເມື່ອຖືກນຳໂຕມາເຂົ້າເຝົ້າກະສັດ ດານີເອນໄດ້ທູກພະອົງວ່າແນວໃດ?

"ດານີເອນທູນພຣະຣາຊາວ່າ, "ຂ້າແດ່ພຣະຣາຊາ ບໍ່ມີຫມໍວິຊາອາຄົມ ຫມໍມົນ ຫມໍມໍ ຫລືຫມໍດູຣືກ ຍາມຄົນໃດດອກບອກພຣະອົງຢ່າງນັ້ນໄດ້ ມີແຕ່ພຣະເຈົ້າເທິງຟ້າສວັນທີ່ຊົງສາມາດເຜີຍຄວາມເລິກລັບທັງຫລາຍໄດ້ ຂ້າແດ່ພຣະຣາຊາ ພຣະເຈົ້າໄດ້ຊົງບອກໃຫ້ພຣະອົງຮູ້ສິ່ງທີ່ຈະເກີດຂຶ້ນໃນອະນາຄົດ ຄວາມຝັນແລະນິມິດທີ່ເກີດຂຶ້ນໃນຂນະທີ່ພຣະອົງຊົງບັນທົມນັ້ນມີດັ່ງນີ້" (ດານີເອນ 2:27, 28)

## ຮູບຂະໜາດໃຫຍ່

### ດານີເອນໄດ້ທູນວ່າກະສັດຝັນເຫັນຫຍັງ?

"ຄວາມຝັນແລະນິມິດທີ່ເກີດຂຶ້ນໃນຂນະທີ່ພຣະອົງຊົງບັນທົມນັ້ນມີດັ່ງນີ້: ຄືພຣະອົງຊົງຝັນເຖິງເຣື່ອງທີ່ຈະເກີດຂຶ້ນໃນອະນາຄົດ ເພາະພຣະເຈົ້າຜູ້ຊົງເຜີຍເຣື່ອງເລິກລັບໄດ້ສະແດງໃຫ້ພຣະອົງຮູ້ເຖິງສິ່ງທີ່ຈະເກີດຂຶ້ນ ເຣື່ອງເລິກລັບນີ້ຊົງເຜີຍໃຫ້ຂ້າພຣະອົງຮູ້ ບໍ່ແມ່ນຍ້ອນຂ້າພຣະອົງເປັນຄົນສລາດກວ່າຄົນອື່ນໆດອກ ແຕ່ຍ້ອນພຣະເຈົ້າຢາກໃຫ້ພຣະຣາຊາຮູ້ຄຳແກ້ຄວາມຝັນ ແລະເຂົ້າໃຈພຣະດຳຣິໃນພຣະທັຍຂອງພຣະອົງເອງ ຂ້າແດ່ພຣະຣາຊາ ໃນນິມິດຂອງພຣະອົງນັ້ນ ພຣະອົງໄດ້ທອດພຣະເນດເຫັນຮູບຂນາດໃຫຍ່ຢືນຢູ່ຊ້ອງພຣະພັກ ຮູບນີ້ສ່ອງແສງເຫລື້ອມແລະເປັນຕາຢ້ານ (ດານີເອນ 2:28-31)

### ສ່ວນຕ່າງໆຂອງຮູບນີ້ປະກອບດ້ວຍຫຍັງ?(ເປັນໂລຫະຫຍັງ)

"ຫົວຂອງຮູບນີ້ເປັນຄຳຢ່າງດີທີ່ສຸດ ເອິກແລະແຂນເປັນເງິນ ແອວແລະກະໂພກເປັນທອງສຳລິດ ຂາເປັນເຫລັກ ຕີນເປັນເຫລັກປົນດິນ" (ດານີເອນ 2:32, 33)

### ແມ່ນຫຍັງທີ່ເຮັດໃຫ້ຮູບໃຫ້ແຕກຫມຸ່ນໄປ?

"ຂນະພຣະອົງທອດພຣະເນດຢູ່ນັ້ນ ມີຫີນໃຫຍ່ກ້ອນນຶ່ງແຕກອອກມາເອງໂດຍບໍ່ມີໃຜເຮັດ ຫີນນີ້ໄດ້ກະທົບໃສ່ຕີນເຫລັກປົນດິນຂອງຮູບນັ້ນຈົນແຕກຫມຸ່ນໄປ" (ດານີເອນ 2:34)

### ແລ້ວສ່ວນຕ່າງໆຂອງຮູບນັ້ນກາຍເປັນຫຍັງ?

ແລ້ວໃນທັນໃດນັ້ນ ສ່ວນເປັນເຫລັກ ເປັນດິນ ເປັນທອງສຳລິດ ເປັນເງິນແລະຄຳກໍແຕກຫມຸ່ນໄປເຫມືອນເຂົ້າລີບໃນລານທີ່ລົມພັດປິວໄປໃນຍາມຮ້ອນ ໂດຍບໍ່ມີຮ່ອງຮອຍໃຫ້ພົບເຫັນເລີຍ ແຕ່ກ້ອນຫີນນັ້ນໄດ້ກາຍເປັນພູເຕັມພື້ນພິພົບ ຄວາມຝັນນັ້ນເປັນດັ່ງນີ້ແຫລະ (ດານີເອນ 2:35)

## ດານີເອນແລະຄຳແກ້ຝັນ

**ດານີເອນໄດ້ເລີ່ມແກ້ຄວາມຝັນດ້ວຍຂໍ້ຄວາມໃດ?**

"ພຣະເຈົ້າເທິງຟ້າສວັນໄດ້ຊົງແຕ່ງຕັ້ງໃຫ້ພຣະອົງເປັນພຣະຣາຊາ ຊົງປະທານຣິດອຳນາດແລະກຽດຕິຍົດໃຫ້ພຣະອົງ ພຣະເຈົ້າໄດ້ຊົງແຕ່ງຕັ້ງໃຫ້ພຣະອົງເປັນຜູ້ປົກຄອງຄົນຕລອດທັງສັດແລະນົກທັງປວງທີ່ອາໄສຢູ່ໃນໂລກ ຫົວຄຳນັ້ນແມ່ນພຣະອົງເອງ" (ດານ ິເອນ 2:37, 38)

**ໝາຍເຫດ**: ເໝືອນດັ່ງຫົວທອງຄຳທີ່ເປັນຕົວແທນຂອງອານາຈັກນີ້ ອານາຈັກບາບີໂລນແມ່ນ "ອານາຈັກທອງຄຳແຫ່ງສະໄໝທອງຄຳ" ພາຍໃຕ້ການຄອງລາດຂອງກະສັດເນບູກາດເນສຊາ ບາບີໂລນໄດ້ເປັນອານາຈັກທີ່ຍິ່ງໃຫຍ່ ແລະເປັນມະຫານະຄອນທີ່ສວຍງາມຢ່າງທີ່ຫາອານາຈັກອື່ນປຽບປານບໍ່ໄດ້. ນັກໂບຮານນະຄະດີໄດ້ຄົ້ນພົບວ່າບົດພັນລະນາຂອງນັກຂຽນສະໄໝໂລບານເຊັ່ນ ເຮໂຣໂດຕັສ (Herodotus) ແມ່ນເປັນບົດພັນລະນາທີ່ຖືກຕ້ອງຕາມຈິງຫລາຍ ຍົກເວັ້ນບາງຕອນທີ່ອາດຈະກ່າວເກີນຈິງກ່ຽວກັບຂະໜາດຂອງເມືອງແລະປ້ອມປາການອັນມະຫຶມາ, ເຄື່ອງປະດັບຂອງວິຫານແລະລາດຊະວັງຕ່າງໆ, ຫໍຄອຍອັນສະງ່າຂອງວິຫານ, ສວນດອກໄມ້ຫລາຍຊັ້ນເຊິ່ງເປັນທີ່ຮູ້ດີໃນຄົນກຣີກວ່າເປັນໜຶ່ງໃນເຈັດສິ່ງໂບຮານມະຫັດສະຈັນຂອງໂລກ

**ລັກສະນະຂອງອານາຈັກຖັດຈາກອານາຈັກບາບີໂລນເປັນແນວໃດ?**

"ຕໍ່ຈາກພຣະອົງໄປຈະມີຣາຊອານາຈັກນຶ່ງອີກ ເປັນຣາຊອານາຈັກນ້ອຍກວ່າຂອງພຣະອົງ" (ດານີເອນ 2:39)

**ກະສັດໃດແມ່ນກະສັດອົງສຸດທ້າຍຂອງອານາຈັກບາບີໂລນ?**

"ໃນຄືນມື້ນັ້ນເອງ ເບນຊັສຊາກະສັດບາບີໂລນກໍຖືກປະຫານຊີວິດກະສັດດາຣິອຸສຄົນເມເດັຽ ຈຶ່ງຍຶດອຳນາດ ແລະໄດ້ປົກຄອງຣາຊອານາຈັກ (ເວລານັ້ນກະສັດດາຣິອຸສຊົງມີພຣະຊົນໄດ້ຫົກສິບສອງປີ)" (ດານີເອນ 5:30,31) (ໃຫ້ເບິ່ງ ດານີເອນ 5:1,2 ເຊັ່ນກັນ)

**ອານາຈັກຂອງເບນຊັສຊາໄດ້ຕົກເປັນຂອງຫລັງຈາກນັ້ນ?**

"ຣາຊອານາຈັກຂອງພຣະອົງຈະຖືກແບ່ງອອກໃຫ້ຄົນເມເດັຽ ແລະຄົນເປີເຊັຽ" (ດານ ິເອນ 5:28)

**ໃນຮູບນັ້ນ ແມ່ນຫຍັງທີ່ເປັນຕົວແທນຂອງອານາຈັກເມເດຍແລະເປີເຊຍ?**

ເອິກແລະແຂນເປັນເງິນ (ດານ ິເອນ 2:32)

**ໃນຮູບນັ້ນ ແມ່ນຫຍັງທີ່ເປັນຕົວແທນຂອງອານາຈັກກຣີກ ຫລື ເມເກໂດເນຍ ເຊິ່ງໄດ້ໂຄ່ນລົ້ມອານາຈັກເມເດຍແລະເປີເຊຍ?**

"ຫລັງຈາກນັ້ນແມ່ນຣາຊອານາຈັກທີ່ສາມ ເປັນຣາຊອານາຈັກທອງສຳລິດ ຊຶ່ງຈະມີອຳນາດແຜ່ໄປທົ່ວໂລກ" (ດານ ິເອນ 2:39)

**ໝາຍເຫດ**: ອານາຈັກທີ່ຂຶ້ນມາແທນອານະຈັກເປີເຊຍແມ່ນອານາຈັກກຣີກ ເຊິ່ງໄດ້ຖືກກວ່າໄວ້ຢ່າງແຈ່ມແຈ້ງໃນ ດານີເອນ 8:5-8, 20,21

**ອານາຈັກທີສີ່ແມ່ນເປັນແນວໃດ?**

"ແລ້ວຈະມີຣາຊອານາຈັກທີ່ສີ່ ເປັນອານາຈັກທີ່ມີອຳນາດແລະແຂງດັ່ງເຫລັກ ຊຶ່ງສາມາດຕີສິ່ງທັງຫລາຍໃຫ້ຫັກແລະແຕກຫມຸ່ນໄດ້ ຣາຊອານາຈັກນີ້ຈະຫັກແລະທັບມ້າງຣາຊອານາຈັກກ່ອນໆທັງປວງ" (ດານ ິເອນ 2:40)

**ຂໍ້ພຣະຄັມພີໃດທີ່ບອກໃຫ້ຮູ້ວ່າຈັກກະພັດໂຣມມັນໄດ້ຂຶ້ນຄອງໂລກ?**

"ຢູ່ມາໃນຄາວນັ້ນມີຄຳສັ່ງຈາກກາຍຊາໂອຄຸໂຕໃຫ້ຈົດທະບຽນສຳມະໂນຄົວທົ່ວແຜ່ນດິນ(ໂລກ)" (ລູກາ 2:1)

**ໝາຍເຫດ**: ເມື່ອເວົ້າເຖິງການໂຈມຕີຂອງໂຣມມັນ ກິບບອນ (Gibbon) ໄດ້ໃຊ້ການອຸປະໄມທີ່ໄດ້ກ່າວໄວ້ໃນດານີເອນ 2 ລາວໄດ້ກ່າວວ່າ "ອາວຸດຂອງສາທາລະນະຊົນ ທີ່ບາງຄັ້ງກໍຖືກພ່າຍແພ້ ແຕ່ສ່ວນໃຫຍ່ແມ່ນໄດ້ຮັບໄຊຊະນະມາຕະຫລອດ ແມ່ນມີຄວາມວ່ອງໄວໃນເສິກສົງຄາມຕີຢູເຟຣດ ແດນູບີ ຣາຍ ແລະປະເທດຕ່າງໆ ແລະຮູບຕ່າງໆທີ່ເປັນທອງຄຳ ຫລື ເງິນ ທອງສຳລິດ ອາດຕົກເປັນທາດຂອງອານາຈັກແລະກະສັດຕ່າງ ອາວຸດເຫລົ່ານີ້ໄດ້ຖືກທຳລາຍລົງດ້ວຍລາຊະວົງເຫລັດແຫ່ງໂຣມ" ອ້າງອີງຈາກໜັງສືປະຫວັດການລົ້ມສະຫລາຍຂອງອານາຈັກໂຣມມັນ ໜ້າ 38

## ຄວາມລົ້ມເຫລວຂອງມະນຸດທີ່ຈະລວມປະເທດຊາດຕ່າງໆເຂົ້າເປັນໜຶ່ງດຽວ

**ຕີນແລະນີ້ວຕີນທີ່ເປັນເຫລັກປົນດິນມີຄວາມໝາຍວ່າແນວໃດ?**

"ທີ່ພຣະອົງທອດພຣະເນດເຫັນຕີນແລະນີ້ວຕີນເປັນດິນປົນເຫລັກນັ້ນ ຫມາຍຄວາມວ່າຈະເປັນຣາຊອານາຈັກປະສົມ (ອານາຈັກຈະຖືກແບ່ງແຍກອອກ) ມັນຈະມີຄວາມແຂງຂອງເຫລັກປົນຢູ່ດ້ວຍເພາະວ່າໄດ້ມີເຫລັກປະສົມຢູ່ກັບດິນຫນຽວ (ດານ ິເອນ 2:41)

**ໝາຍເຫດ**: ເຜົ່າບາບາຣຽນທີ່ຄອບຄອງອານາຈັກໂຣມໄດ້ສ້າງຕັ້ງອານາຈັກຕ່າງໆທີ່ໄດ້ກາຍເປັນຊົນຊາດຕ່າງໆຂອງຢູໂຣບສະໄໝໃໝ່

**ໄດ້ມີຄົນພະຍາຍາມລວບລວມອານາຈັກຕ່າງໆທີ່ແຕກອອກມາຈາກອານາຈັກໂຣມເຂົ້າເປັນໜຶ່ງດຽວບໍ່?**

"ທີ່ພຣະອົງທອດພຣະເນດເຫັນເຫລັກປະສົມດ້ວຍດິນຫນຽວນັ້ນ ພວກຜູ້ປົກຄອງຣາຊອານາຈັກນັ້ນຈະພຍາຍາມຮອບຮວມຄອບຄົວຂອງເຂົາເຂົ້າກັນດ້ວຍການແຕ່ງງານ ແຕ່ພວກເຂົາຈະເຮັດບໍ່ໄດ້ຢ່າງດຽວກັບເຫລັກທີ່ປະສົມເຂົ້າກັບດິນບໍ່ໄດ້" (ດານ ິເອນ 2:43)

**ໝາຍເຫດ**: ໄດ້ມີຜູ້ນຳຫລາຍຄົນ ເຊັ່ນ Charlemgne, Charles V, Louis XIV, Napoleon, Kaiser Wilhelm, ແລະ Hitler ໄດ້ພະຍາຍາມລວບລວມອະນາຈັກຕ່າງໆທີ່ແຍກອອກມາຈາກໂຣມ ແລະພວກເຂົາກໍເຮັດບໍ່ສຳເລັດ ລາດລາດຊະວົງໄດ້ພະຍາຍາມລວບລວມເຂົ້າກັນໂດຍການໃຫ້ລູກຫລານຂອງພວກເຂົາແຕ່ງງານກັນ ເພື່ອຈະໃຫ້ອາ-

ນາຈັກຂອງເຂົາແຂງແຮງແລະເປັນໜຶ່ງດຽວ ແຕ່ພວກເຂົາກໍຍັງເຮັດບໍ່ສຳເລັດ ອານາຈັກເຫລົ່ານັ້ນກໍຍັງແບ່ງແຍກກັນຢູ່ ໄດ້ມີການປະຕິວັດທາງດ້ານການເມືອງແລະມີການປ່ຽນແປງຫລັກໝາຍເຂດແດນໃນທະວີບຢູໂຣບຫລາຍໆເທື່ອນັບຕັ້ງແຕ່ຕອນທ້າຍຂອງອານາຈັກໂຣມມັນຕາເວັນຕົກ ແຕ່ວ່າອານາຈັກຕ່າງໆກໍຍັງແບ່ງແຍກກັນຢູ່

## ແມ່ນຫຍັງຈະຕ້ອງເກີດຂຶ້ນໃນຊ່ວງເວລາຂອງອານາຈັກເຫລົ່ານີ້?

"ໃນສະໄຫມພຣະຣາຊາເຫລົ່ານັ້ນປົກຄອງຢູ່ ພຣະເຈົ້າເທິງຟ້າສວັນຈະຊົງຈັດຕັ້ງຣາຊອານາຈັກອັນໜຶ່ງຂຶ້ນ ຊຶ່ງຈະບໍ່ຖືກທຳລາຍແລະຈະຕັ້ງຢູ່ຕລອດໄປ ຣາຊອານາຈັກນີ້ຈະບໍ່ປຣາໄຊແຕ່ຈະທຳລາຍຣາຊອານາຈັກອື່ນທັງປວງໃຫ້ຫມົດສິ້ນ" (ດານິເອນ 2:44)

**ໝາຍເຫດ**: ຂໍ້ນີ້ໄດ້ທຳນາຍເຖິງການສ້າງຕັ້ງຂອງອານາສາກົນອານາຈັກໜຶ່ງ ເຊິ່ງເປັນອານາຈັກຂອງພຣະເຈົ້າ. ອາ-ນາຈັກນີ້ຈະມາແທນທີ່ອານາຈັກຕ່າງໆໃນໂລກທີ່ເຄີຍມີມາ ແລະຈະຕັ້ງຢູ່ຕະຫລອດໄປ ເວລາທີ່ຈະກໍ່ຕັ້ງອານາຈັກນີ້ແມ່ນ "ໃນສະໄໝຂອງອານາຈັກເຫລົ່ານີ້" ອານາຈັກນີ້ບໍ່ໄດ້ໝາຍເຖິງສີ່ອານາຈັກໃນອາດີດ ເພາະວ່າພວກມັນບໍ່ໄດ້ມີຢູ່ພ້ອມກັນ ພວກມັນເກີດຂຶ້ນມາຍ້ອນການໂຄ່ນລົ້ມອານາຈັກໜຶ່ງທີ່ມີກ່ອນໜ້າມັນ ອານາຈັກຂອງພຣະເຈົ້ານີ້ກໍບໍ່ໄດ້ໝາຍເຖິງອານາຈັກໃນສະໄໝທີ່ພຣະຄຣິດໄດ້ສະເດັດມາເປັນເທື່ອທຳອິດ ເພາະວ່າໃນສະໄໝຂອງພຣະຄຣິດນັ້ນ ອານາຈັກທັງສິບທີ່ແຍກອອກມາຈາກອານາຈັກໂຣມຍັງບໍ່ທັນເກີດມາເທື່ອ ເພາະສະນັ້ນອະນາຈັກນີ້ຈະຕ້ອງເກີດຂຶ້ນໃນອະນາຄົດແນ່ນອນ

## ມີຄຳປະກາດອັນໃດໃນພຣະຄັມພີພາກພັນທະສັນຍາໃໝ່ທີ່ໄດ້ກ່າວໃຫ້ຮູ້ກ່ຽວກັບການສ້າງຕັ້ງອາ-ນາຈັກຂອງພຣະເຈົ້າ?

"ເມື່ອເທວະດາຕົນທີ່ເຈັດໄດ້ເປົ່າແກຂຶ້ນແລ້ວ ມີຫລາຍສຽງໃນສວັນກ່າວດັ່ງຂຶ້ນວ່າ, ຣາຊອານາຈັກແຫ່ງພິພົບນີ້ ໄດ້ກາຍເປັນກຳມະສິດແຫ່ງອົງພຣະຜູ້ເປັນເຈົ້າຂອງເຮົາທັງຫລາຍ ແລະເປັນຂອງພຣະຄຣິດຂອງພຣະອົງ ພຣະອົງຈະຊົງສເວີຍຣາດຕລອດໄປເປັນນິດ" (ພຣະນິມິດ 11:15)